

# P-EBT ປະຈຳລະດູຮ້ອນ ແມ່ນຢູ່ນີ້!

## P-EBT ປະຈຳລະດູຮ້ອນ ແມ່ນຫຍັງ?

ໂຄງການ EBT ສຳລັບພະຍາດລະບາດ ຫຼື P-EBT, ໃຫ້ເງິນສົງເຄາະດ້ານອາຫານໃຫ້ແກ່ເດັກນ້ອຍເພື່ອເປັນການທົດແທນຄ່າອາຫານ ເນື່ອງຈາກການບໍລິການອາຫານປະຈຳທີ່ ທີ່ມີຈຳນວນຈຳກັດຢູ່ໃນໂຮງຮຽນ ແລະ ສະຖານລ້ຽງເດັກ ເນື່ອງຈາກມີພະຍາດໂຄວິດ-19. ພວກເຮົາໄດ້ຮັບການອະນຸມັດຈາກລັດຖະບານເພື່ອຂະຫຍາຍໂຄງການ P-EBT ໄປຍັງຊ່ວງລະດູຮ້ອນຕື່ມ.

## ໃຜມີສິດໄດ້ຮັບ?

ເດັກນ້ອຍສາມາດມີສິດໄດ້ຮັບ P-EBT ປະຈຳລະດູຮ້ອນ ໂດຍອັດຕະໂນມັດ ຖ້າບັນລຸໄດ້ຕາມສິ່ງໃດໜຶ່ງຕໍ່ໄປນີ້:

- ພວກເຂົາມີສິດໄດ້ຮັບອາຫານຢູ່ໂຮງຮຽນໂດຍບໍ່ເສຍຄ່າ ຫຼື ຫຼຸດລາຄາໃນສົກຮຽນ 2020-21 ແລະ ໄດ້ລົງທະບຽນ ແລະ ຈົດຊື່ເຂົ້າຮຽນໃນຕອນທ້າຍສົກຮຽນຢູ່ໃນໂຮງຮຽນໃນລັດວໍຊິງຕັນທີ່ເຂົ້າຮ່ວມໃນໂຄງການ National School Lunch Program (ໂຄງການອາຫານທ່ຽງຢູ່ໃນໂຮງຮຽນແຫ່ງຊາດ) ຫຼືໂຄງການ School Breakfast Program (ໂຄງການອາຫານເຊົ້າຢູ່ໃນໂຮງຮຽນ) ຕາມປົກກະຕິ.
- ເດັກນ້ອຍອາຍຸຕ່ຳກວ່າ 6 ປີທີ່ເປັນສະມາຊິກຂອງຄົວເຮືອນທີ່ເຂົ້າຮ່ວມໃນໂຄງການຊ່ວຍເຫຼືອ Basic Food (ອາຫານພື້ນຖານ) ຂອງວໍຊິງຕັນ ທຸກຊ່ວງເວລາລະຫວ່າງເດືອນມິຖຸນາ, ກໍລະກົດ ຫຼື ສິງຫາ 2021.

## ຄອບຄົວຕ່າງໆສາມາດໄດ້ຮັບ P-EBT ປະຈຳລະດູຮ້ອນ ໄດ້ແນວໃດ?

- ບັນດາຄອບຄົວທີ່ມີເດັກນ້ອຍທີ່ບັນລຸໄດ້ຕາມເງື່ອນໄຂໃນການມີສິດໄດ້ຮັບທີ່ໄດ້ລະບຸໄວ້ ບໍ່ຈຳເປັນຕ້ອງເຮັດຫຍັງເລີຍ! ເງິນສົງເຄາະ P-EBT ປະຈຳລະດູຮ້ອນ ຈະອອກໃຫ້ໂດຍອັດຕະໂນມັດ.
- ບັນດາຄອບຄົວທີ່ບໍ່ສາມາດບັນລຸໄດ້ຕາມເງື່ອນໄຂໃນການມີສິດໄດ້ຮັບ ຍັງສາມາດມີເງື່ອນໄຂໄດ້ຮັບ P-EBT ປະຈຳລະດູຮ້ອນຢູ່ ຖ້າພວກເຂົາເຮັດສິ່ງຕໍ່ໄປນີ້ກ່ອນວັນທີ 31 ສິງຫາ 2021:
  - ເດັກນ້ອຍຢູ່ໃນໂຮງຮຽນ -
    ຖ້າລູກຂອງທ່ານໄດ້ລົງທະບຽນເຂົ້າຮຽນຢູ່ໃນໂຮງຮຽນທີ່ສະໜອງ NSLP ຕັ້ງແຕ່ເດືອນ ມິຖຸນາ 2021, ໃຫ້ສົ່ງຄຳຮ້ອງຂໍອາຫານແບບບໍ່ເສຍຄ່າ ຫຼື ຫຼຸດລາຄາ ເພື່ອຂໍອະນຸມັດຈາກໂຮງຮຽນຂອງທ່ານ. ຖ້າລູກຂອງທ່ານໄດ້ຮັບການອະນຸມັດສຳລັບອາຫານແບບບໍ່ເສຍຄ່າ ຫຼື ຫຼຸດລາຄາ, ທ່ານຈະໄດ້ຮັບເງິນສົງເຄາະ P-EBT ປະຈຳລະດູຮ້ອນ.
  - ເດັກນ້ອຍອາຍຸຕ່ຳກວ່າ 6 ປີ -
    ສົ່ງຄຳຮ້ອງຂໍໂຄງການ Basic Food (ອາຫານພື້ນຖານ) ໄປຍັງ: www.WashingtonConnection.org ຫຼື ໂທຫາສູນຕິດຕໍ່ບໍລິການລູກຄ້າຂອງ DSHS ທີ່ເບີ 877-501-2233 ສຳລັບການສຳພາດ.

## ບັນດາຄອບຄົວຈະໄດ້ຮັບຫຼາຍເທົ່າໃດ?

ເດັກນ້ ອຍທີ່ມີເງື່ອນໄຂໄດ້ ຮັບ P-EBT ປະຈຳລະດູຮ້ ອນ ຈະໄດ້ ຮັບເງິນຄັ້ ງດຽວ, ລວມເປັນເງິນທັງໝົດ 375 ໂດລາ ເພື່ອໃຊ້ ຈ່າຍໃນຊ່ວງເດືອນພັກລະດູຮ້ ອນປະຈຳ ເດືອນກໍລະກົດ ແລະ ເດືອນສິງຫາ 2021.

## ບັນດາຄອບຄົວຈະໄດ້ຮັບບັດ P-EBT ໃໝ່ໃນແຕ່ລະເດືອນບໍ?

ບໍ່, ບັນດາຄອບຄົວຄວນຮັກສາບັດ P-EBT ຂອງເດັກແຕ່ລະຄົນໄວ້. ດ້ ວຍການອະນຸມັດຈາກລັດຖະບານກາງ, ພວກເຮົາອາດຈະໂຫຼດບັດຄືນໃໝ່ໄດ້ ຖ້ າວ່າມາດຕະການສຸກເສີນດ້ ານສາທາລະນະສຸກຂອງພະຍາດໂຄວິດ-19 ຍັງຄົງສືບຕໍ່.

## ເຂົ້າເບິ່ງ dshs.wa.gov/PEBT ເພື່ອຮຽນຮູ້ເພີ່ມຕື່ມ!

ຖ້ າທ່ານຕ້ ອງການຂໍ້ ມູນນີ້ ເປັນພາສາອື່ນ, ໃຫ້ ເຂົ້ າໄປເບິ່ງທີ່ເວັບໄຊນີ້ ຫຼື ໂທຫາສູນຕິດຕໍ່ P-EBT ທີ່ເບີ **833-518-0282**.

ບັນດາຄອບຄົວໄດ້ ຮັບການຊຸກຍູ້ ໃຫ້ ເຂົ້ າຮ່ວມໃນໂຄງການອາຫານຢູ່ໃນໂຮງຮຽນ Grab-n-Go (ຈັບອາຫານແລ້ ວກໍໄປ) ເຖິງແມ່ນວ່າເຂົາເຈົ້ າຈະໄດ້ ຮັບເງິນສົງເຄາະ P-EBT ແລ້ ວກໍຕາມ.

*ສະຖາບັນນີ້ ເປັນຜູ້ ໃຫ້ ໂອກາດທີ່ມີຄວາມເທົ່າທຽມກັນ.*

Washington State
Department of Social & Health Services
Transforming lives